ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------

ຫ້ອງວ່າການແຂວງ

ເລກທີ 713/ຫວຂ.ບກ.
ບໍ່ແກ້ວ, ວັນທີ 4 ສິງຫາ 2020

# ແຈ້ງການ

**ເຖິງ:** ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກການທີ່ກ່ຽວຂ້ອງ ຫ້ອງວ່າການເມືອງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ບັນດາຜູ້ປະກອບການ, ຫົວໜ່ວຍທຸລະກິດ ທີ່ກ່ຽວຂ້ອງກັບການຜະລິດ ແລະ ການຄ້າຂາຍໝູ ລວມທັງຜູ້ບໍລິໂພກພາຍໃນແຂວງ.

**ເລື່ອງ:** ກ່ຽວກັບການໂຈະຊົ່ວຄາວ ການນຳເຂົ້າ ໝູຊີ້ນ, ໝູພໍ່ແມ່ພັນ, ໝູນ້ອຍ ແລະ ຜະລິດຕະພັນຊີ້ນໝູທຸກຊະນິດຈາກ ແຂວງຫຼວງນໍ້າທາ ຫຼື ຜ່ານແຂວງ ຫຼວງນໍ້າທາ ແລະ ປະເທດໄທ.

- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດແລະການສັດຕະວະແພດ( ສະບັບປັບປຸງ ) ສະບັບເລກທີ 08/ ສພຊ, ລົງວັນທີ 11 ພະຈິກ 2016.
- ອີງຕາມ ທິດຊີ້ນຳຂອງທ່ານ ເຈົ້າແຂວງ ແຂວງບໍ່ແກ້ວ ຄັ້ງວັນທີ 2 ກໍລະກົດ 2020.
- ອີງຕາມ ການປະສານສົມທົບກັບແຂວງຫຼວງນໍ້າທາ(ຂະແໜງລ້ຽງສັດ ແລະ ການປະມົງ) ທາງໂທລະສັບຄັ້ງວັນທີ 2 ກໍລະກົດ 2020 ກ່ຽວກັບການລະບາດຂອງພະຍາດອະຫິວາໝູອາຟຼິກາ.

**ຫ້ອງວ່າການແຂວງບໍ່ແກ້ວ ໄດ້ອອກແຈ້ງການ** ໃຫ້ໂຈະຊົ່ວຄາວ ການນຳເຂົ້າໝູຊີ້ນ, ໝູພໍ່ແມ່ພັນ, ໝູນ້ອຍ ແລະ ຜະລິດຕະພັນຊີ້ນໝູ ທຸກຊະນິດຈາກ ແຂວງຫຼວງນໍ້າທາ ຫຼື ຈາກບັນດາແຂວງພາຍໃນ ແລະ ຕ່າງປະເທດ(ສປຈີນ, ສສ ຫວຽດນາມ) ຜ່ານແຂວງຫຼວງນໍ້າທາ ແລະ ຈາກປະເທດໄທ ເຂົ້າມາ ແຂວງບໍ່ແກ້ວ ເນື່ອງຈາກວ່າ ປະຈຸບັນ ນີ້ມີການແຜ່ລະບາດຮ້າຍແຮງຂອງພະຍາດອະຫິວາໝູອາຟຣິກາ ທີ່ ສປຈີນ, ສສຫວຽດນາມ, ປະເທດໄທ, ພະມ້າ ແລະ ໃນປະຈຸບັນກຳລັງມີການລະບາດຢູ່ແຂວງ ຫຼວງນໍ້າທາ.

ເພື່ອເປັນການສະກັດກັ້ນການແຜ່ລະບາດຂອງພະຍາດດັ່ງກ່າວເຂົ້າມາສູ່ ແຂວງບໍ່ແກ້ວ ພວກເຮົາ ເຊິ່ງຈະສ້າງຄວາມເສຍຫາຍຢ່າງມະຫາສານຕໍ່ເສດຖະກິດຂອງແຂວງ ແລະ ຈະເປັນຜົນກະທົບໂດຍກົງຢ່າງໃຫຍ່ຫຼວງຕໍ່ຜູ້ປະກອບການລ້ຽງໝູພ້ອມນີ້ຈະມີຜົນກະທົບຕໍ່ການສະໜອງສະບຽງອາຫານຕໍ່ຜູ້ບໍລິໂພກຊີ້ນໝູດ້ວຍ. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງຊີ້ນຳຂະແໜງລ້ຽງສັດ ແລະ ການປະມົງ ແລະ ເຈົ້າໜ້າທີ່ປະຈຳດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ໃຫ້ເຂັ້ມງວດກວດກາບໍ່ໃຫ້ມີການລັກລອບນຳເຂົ້າໝູຊີ້ນ, ໝູນ້ອຍ ແລະ ຜະລິດຕະພັນຊີ້ນໝູທຸກຊະນິດຈາກບັນດາແຂວງ, ປະເທດໃກ້ຄຽງ ທີ່ໄດ້ກ່າວມາຂ້າງເທິງນັ້ນຢ່າງເຂັ້ມງວດ, ຫາກເຈົ້າໜ້າທີ່ກວດພົບເຫັນເປັນລັດຕ່າງໝູມີຊີວິດ ແມ່ນ ຕ້ອງສົ່ງກັບຄືນຕົ້ນທາງ, ຫາກແມ່ນຜະລິດຕະພັນກ່ຽວກັບໝູ ແມ່ນໃຫ້ຍຶດ ແລະ ທຳລາຍກັບທີ່ ພ້ອມປັບໃໝ ແລະ ສຶກສາອົບຮົມຕາມລະບຽບການ.

ຖ້າຜູ້ປະກອບການຈະນຳເຂົ້າໝູພໍ່ແມ່ພັນ, ໝູຊີ້ນ, ໝູນ້ອຍ ແລະ ຜະລິດຕະພັນໝູ ແມ່ນຕ້ອງໄດ້ຮັບອະນຸຍາດຈາກກົມລ້ຽງສັດ ແລະ ການປະມົງ ແລະ ຕ້ອງມີໃບຢັ້ງຢືນທີ່ມາຂອງໝູຈາກເຂດທີ່ປອດພະຍາດໝູອອກໃຫ້ໂດຍກົມລ້ຽງສັດ ແລະ ການປະມົງ, ຕ້ອງມີໃບຢັ້ງຢືນມາດຕະຖານຟາມຕົ້ນທາງ, ມີໃບຢັ້ງຢືນສຸຂະພາບຜົນກວດບໍ່ພົບເຊື້ອຂອງພະຍາດ FMD, ASF, ແລະ PRRS ຈາກຫ້ອງວິໄຈຂອງພາກລັດເທົ່ານັ້ນ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າຫ້ອງວ່າການແຂວງບໍ່ແກ້ວ**

ຫ້ອງວ່າການແຂວງບໍ່ແກ້ວ
ຫ້ອງວ່າການ
ແຂວງ

ບຸນທອງ ແສງສີກອງ
BOUNTHONG SENGSIKONG

*ບ່ອນນຳສົ່ງ:

| | |
|---|---|
| 1. ພະແນກກະສິກຳ ແລະ ປ່າໄມ້ ເພື່ອຈັດຕັ້ງປະຕິບັດ | 1 ສະບັບ |
| 2. ຫ້ອງການກະສິກຳແລະປ່າໄມ້ເມືອງ ເພື່ອຈັດຕັ້ງປະຕິບັດ | 1 ສະບັບ |
| 3. ດ່ານສາກົນແລະດ່ານປະເພນີ ເພື່ອຈັດຕັ້ງປະຕິບັດ | 1 ສະບັບ |
| 4. ຜູ້ປະກອບການ ເພື່ອຊາບ | 1 ສະບັບ |
| 5. ຜູ້ຈັດສັນຕະຫຼາດເພື່ອຊາບ | 1 ສະບັບ |
| 7. ພະແນກການຄ້າແຂວງເພື່ອຊາບ | 1 ສະບັບ |
| 8.ພະແນກການເງິນເພື່ອຊາບ | 1 ສະບັບ |
| 9. ຫ້ອງວ່າການແຂວງເພື່ອຊ່ວຍຊີ້ນຳ | 1 ສະບັບ |